ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 432/ສປສສ

ນະຄອນຫຼວງວຽງຈັນ, ວັນທີ 21/12/2012

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາທ່ານຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ແລະ ຈ່າສານ ຂອງສານປະຊາຊົນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012

ອີງຕາມ ມາດຕາ 369 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ມາດຕາ 274 ຂອງກົດ ໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012;

ອີງຕາມ ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ລັດຖະດຳລັດ ສະບັບເລກທີ 235/ປປທ ລົງວັນທີ 01 ສິງຫາ 2012 ຂອງປະທານປະເທດ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012ແລະ ລັດຖະດຳລັດ ສະບັບເລກທີ 236/ປປທ ລົງວັນທີ 01 ສິງຫາ 2012 ຂອງປະທານປະເທດ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012;

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012, ຊຶ່ງປະທານປະເທດໄດ້ປະກາດໃຊ້ແລ້ວ ນັບແຕ່ວັນທີ 1 ສິງຫາ 2012; ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບກັນ ພ້ອມທັງເປັນບ່ອນອີງ ໃຫ້ແກ່ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ແລະ ຈ່າສານ ຂອງສານປະຊາຊົນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ ໄດ້ນຳໃຊ້ເຂົ້າໃນການຄົ້ນຄວ້າພິຈາລະນາຕັດສິນ ແລະ ພິພາກສາຄະດີ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳດັ່ງນີ້:

1. ໃຫ້ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ເລີ່ມແຕ່ວັນທີ 1 ພະຈິກ ປີ 2012 ເປັນຕົ້ນໄປ;
2. ສຳລັບຄະດີ ທີ່ສານຂັ້ນຕົ້ນ ໄດ້ຄົ້ນຄວ້າພິຈາລະນາຕັດສິນ ກ່ອນ ຫຼື ພາຍຫຼັງ ວັນທີ 1 ພະຈິກ 2012 ໂດຍນຳໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເກົ່າ ປີ 2004 ນັ້ນ, ຖ້າຫາກມີການຂໍອຸທອນ ຫຼື ຂໍລຶບລ້າງ ໃຫ້ສານຂັ້ນອຸທອນ ແລະ ສານຂັ້ນລຶບລ້າງ ວິນິດໄສເຖິງມາດຕາ ທີ່ມີການປັບປຸງຕາມກົດໝາຍ ສະບັບປັບປຸງໃໝ່ ໂດຍບໍ່ໃຫ້ພິພາກສາສິ່ງຄືນ ( ສະເພາະກໍລະນີຢັ້ງຢືນ ).

    ຕົວຢ່າງ: ຄະນະສານແພ່ງຂອງສານຂັ້ນຕົ້ນ ໄດ້ຕັດສິນຄະດີໂດຍນຳໃຊ້ມາດຕາ 94 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບ ປີ 2004, ແຕ່ໄດ້ປ່ຽນມາເປັນມາດຕາ 251 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012; ໃຫ້ສານຂັ້ນອຸທອນ ຫຼື ສານຂັ້ນລຶບລ້າງ ພິພາກສາປ່ຽນແປງ ຈາກມາດຕາ 94 ມາເປັນມາດຕາ 251 ເລີຍ ໂດຍບໍ່ຕ້ອງພິພາກສາສິ່ງຄືນ.

    ໃນກໍລະນີມາດຕາ 40 ຂອງກົດໝາຍສະບັບ ປີ 2004 ໄດ້ແຍກອອກເປັນຫຼາຍມາດຕາ ຄືມາດຕາ 143, 144 ແລະ 145 ຂອງກົດໝາຍ ສະບັບປັບປຸງ ປີ 2012 ຫຼື ບາງບັນຫາທີ່ບໍ່ໄດ້ກຳນົດ ໃນກົດໝາຍສະບັບເກົ່າ ແຕ່ໄດ້ກຳນົດເຂົ້າໃນກົດໝາຍສະບັບປັບປຸງໃໝ່, ໃຫ້ສານຂັ້ນອຸທອນ ຫຼື ສານຂັ້ນລຶບລ້າງ ວິນິດໄສໃສ່ບັນດາມາດຕາ ຂອງກົດໝາຍສະບັບປັບປຸງ ປີ 2012 ເລີຍ.

    ສຳລັບ ການດຳເນີນຄະດີອາຍາ ກໍໃຫ້ຈັດຕັ້ງປະຕິບັດ ຄືກັນກັບການດຳເນີນຄະດີແພ່ງ ທີ່ໄດ້ຍົກຕົວຢ່າງມາຂ້າງເທິງນັ້ນ.

3. ໃຫ້ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ ນຳພາຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ; ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບເຫັນບັນຫາໃດທີ່ຫຍຸ້ງຍາກ ໃຫ້ລາຍງານຄືນສານປະຊາຊົນສູງສຸດ ເພື່ອຈະຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

[illegible]

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ (ເພື່ອຊາບ)
- ໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອກວດກາ)
- ກະຊວງຍຸຕິທຳ 1 ສະບັບ (ເພື່ອຊາບ)
- ຄະນະສານ ແລະ ບັນດາກົມຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບ (ເພື່ອປະຕິບັດ)
- ບັນດາປະທານສານປະຊາຊົນ ແລະ ສານທະຫານ ໃນຂອບເຂດທົ່ວປະເທດ (ເພື່ອຈັດຕັ້ງປະຕິບັດ)
- ສຳເນົາໄວ້ 2 ສະບັບ.